ເລກທີ 001 /ສລອຍ-6

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ
ສັນຕິພາບ ເອກະລາດປະຊາທິປະໄຕ ເອກະພາບວັດທະນາຖາວອນ
**********************************

ສະມາຄົມມິດຕະພາບ ລາວ - ຍີ່ປຸ່ນ

ເລກທີ 03 / ສມລ-ຍ

ນະຄອນຫຼວງວຽງຈັນ, ວັນທີ 2 3 MAR 2017

# ຂໍ້ຕົກລົງ

## ຂອງປະທານສະມາຄົມມິດຕະພາບ ລາວ-ຍີ່ປຸ່ນ ວ່າດ້ວຍການເຫັນດີແຕ່ງຕັ້ງ ຄະນະສະມາຄົມອາດີດນັກສຶກສາລາວ ຈາກ ປະເທດຍີ່ປຸ່ນ ຊຸດທີ VI.

-ອີງຕາມໜັງສືສະເໜີ ຂອງ ສະມາຄົມອາດີດນັກສຶກສາລາວ ຈາກ ປະເທດຍີ່ປຸ່ນ ສະບັບເລກທີ 48/ ສລອຍ-5, ລົງວັນທີ 20 ມີນາ 2017 ວ່າດ້ວຍການຂໍສະເໜີແຕ່ງຕັ້ງຄະນະບໍລິຫານງານຊຸດໃໝ່ ຂອງ ສະມາຄົມ ອາດີດນັກສຶກສາ ຈາກ ປະເທດຍີ່ປຸ່ນ ຊຸດທີ VI.

## ປະທານສະມາຄົມມິດຕະພາບ ລາວ-ຍີ່ປຸ່ນ ຕົກລົງ:

ມາດຕາ 01: ແຕ່ງຕັ້ງປະທານ, ຮອງປະທານ, ກຳມະການ, ເລຂານຸການ ຂອງ ສະມາຄົມອາດີດນັກສຶກສາລາວ ຈາກປະເທດຍີ່ປຸ່ນ ຊຸດທີ VI ດັ່ງລາຍຊື່ລຸ່ມນີ້:

1. ທ່ານ ປັນຍາ ຈັນທະວົງ, ຮອງຜູ້ອຳນວຍການສູນປະກັນຄຸນນະພາບການສຶກສາ, ກະຊວງສຶກສາທິການ ແລະ ກິລາ, ເປັນປະທານ.
2. ທ່ານ ພັນປະກິດ ອ່ອນພັນດາລາ, ຮອງຜູ້ອຳນວຍການ ສະຖາບັນພັດທະນາຊັບພະຍາກອນມະນຸດ ລາວ-ຍີ່ປຸ່ນ, ມຊ. ເປັນຮອງປະທານ.
3. ທ່ານ ນາງ ໂອລິລັກ ໂສມອຸໄລ, ພະນັກງານວິຊາການ, ສູນປະກັນຄຸນນະພາບການສຶກສາ, ກະຊວງສຶກສາທິການ ແລະ ກິລາ, ເປັນຮອງປະທານ.
4. ທ່ານ ນາງ ສິມສະຫງວນ ສີງທຽມພອນ, ຫົວໜ້າພະແນກສິນເຊື່ອ ບໍລິສັດ ລາວ-ອາຊຽນ ສິນເຊື່ອ ຈຳກັດ ເປັນຮອງປະທານ.
5. ທ່ານ ສົມມະໂນ ຄຳມະນີວົງ, ຜູ້ຈັດການບໍລິສັດ ສິນໄຊ ບໍລິການຈັດຫາງານ ຈຳກັດ, ເປັນຄະນະ.
6. ທ່ານ ບຸນວາດສະໜາ ສຸທຳມະວົງ, ທີ່ປຶກສາໂຄງການ, ອົງການຈີໄອແຊດ ປະຈຳປະເທດໄທ, ເປັນຄະນະ.

7. ທ່ານ ພອນສະຫວັນ ລັດທະນີ, ທີ່ປຶກສາດ້ານການປັບແປງພູມອາກາດ ແລະ ຈັດການຄວາມສ່ຽງໄພພິບັດ, ອົງການ ແຄ-ສາກົນ ປະຈຳ ລາວ. ເປັນຄະນະ.

8. ທ່ານ ນາງ ທິບດາວັນ ພິມມະສອນ, ພະນັກງານວິຊາການ ສະຖາບັນພະລັງງານທົດແທນ ແລະ ວັດສະດຸໃໝ່, ກະຊວງວິທະຍາສາດ ແລະ ເຕັກໂນໂລຢີ. ເປັນຄະນະ.

9. ທ່ານ ວົງວິໄຊ ຊະນະແຕ້ມ, ພະນັກງານວິຊາການ ພະແນກຄຸ້ມຄອງລະບົບເຄືອຂ່າຍ ແລະ ແມ່ຂ່າຍ, ກົມເຕັກໂນໂລຊີຂໍ້ມູນຂ່າວສານ, ທະນາຄານແຫ່ງ ສປປ ລາວ, ເປັນຄະນະ.

ມາດຕາ 02: ສະມາຄົມອາດີດນັກສຶກສາລາວ ຈາກ ປະເທດຍີ່ປຸ່ນ ແມ່ນ ເປັນສະມາຊິກລ່ວມໝູ່ ຂອງ ສະມາຄົມມິດຕະພາບ ລາວ-ຍີ່ປຸ່ນ.

ມາດຕາ 03: ສະເໜີມາຍັງ ການຈັດຕັ້ງພັກ-ລັດ, ເອກະຊົນ ແລະ ບັນດາທ່ານ ທີ່ ໄດ້ຮັບການແຕ່ງຕັ້ງໃນຄະນະສະມາຄົມອາດີດນັກສຶກສາລາວ ຈາກ ປະເທດຍີ່ປຸ່ນ ຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້.

ມາດຕາ 04: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບຕັ້ງແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ປະທານສະມາຄົມມິດຕະພາບ ລາວ-ຍີ່ປຸ່ນ

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ
ສະມາຄົມ
ມິດຕະພາບ
ລາວ-ຍີ່ປຸ່ນ

ນ.ແສງເດືອນ ຫຼ້າຈັນທະບູນ